# ຄວາມໝາຍການຈົດທະບຽນ ແລະ ຜົນປະໂຫຍດ ຂອງການເຂົ້າຈົດທະບຽນ ໃນຕະຫຼາດຫຼັກຊັບລາວ

**( ຄັດຈາກ ວາລະສານ ການທະນາຄານ, ສະບັບທີ 5 2014 ໃນໜ້າທີ 52-57 )**

*ຜູ້ຂຽນ: ທ່ານ ບົວລຳພູ ຄຳມະນີວົງ, ສຳນັກງານ ຄຄຊ*

*ຜູ້ກວດແກ້: ທ່ານ ນ. ດານີວັນ ເດດພົມມະເທດ, ສຳນັກງານ ຄຄຊ*

## *I. ຄຳວ່າ "ການຈົດທະບຽນ" ຄວາມໝາຍວ່າແນວໃດ?*

**ການຈົດທະບຽນໃນຕະຫຼາດຫຼັກຊັບ ແມ່ນການນຳເອົາຫຼັກຊັບຂອງຕົນໄປຈົດທະບຽນຢູ່ສູນກາງການໃຫ້ບໍລິການຊື້ຂາຍຫຼັກຊັບທີ່ເອີ້ນວ່າ "ຕະຫຼາດຫຼັກຊັບ" ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຖືຮຸ້ນສາມາດຊື້-ຂາຍຫຼັກຊັບຂອງຕົນກັບຜູ້ລົງທຶນລາຍອື່ນໄດ້.**

**"ການຈົດທະບຽນ"** ໝາຍເຖິງ ພາຍຫຼັງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງແລ້ວ ບໍລິສັດໄດ້ນຳເອົາຫຼັກຊັບຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ (ຫຼື ເອີ້ນອີກຊື່ໜຶ່ງວ່າຕະຫຼາດຂັ້ນສອງ) ຕາມລະບຽບການ ການຈົດທະບຽນຂອງຕະຫຼາດຫຼັກຊັບວາງອອກ ຊຶ່ງຫຼັກຊັບຈະຖືກຂຶ້ນທະບຽນຢູ່ຕະຫຼາດຫຼັກຊັບ ແລະ ຖືກຮັບຝາກໄວ້ໃນສູນຮັບຝາກຫຼັກຊັບ ໂດຍເປົ້າໝາຍການຈົດທະບຽນກໍ່ເພື່ອຈຸດປະສົງສ້າງສະພາບຄ່ອງໃຫ້ແກ່ຫຼັກຊັບຂອງຕົນທີ່ຜ່ານການອອກຈຳໜ່າຍ ຫຼື ຂາຍຫຼັກຊັບຢູ່ໃນຕະຫຼາດຂັ້ນໜຶ່ງມາແລ້ວ ເພື່ອເຮັດໃຫ້ຜູ້ຖືຫຼັກຊັບໃນບໍລິສັດດັ່ງກ່າວ ສາມາດແລກປ່ຽນຊື້-ຂາຍເປັນເງິນສົດໄດ້ ໂດຍສະເພາະປະເພດຫຼັກຊັບທຶນ ເປັນຕົ້ນແມ່ນຮຸ້ນຖ້າຊື້ໄປແລ້ວບໍ່ສາມາດຖອນຄືນໄດ້ແຕ່ສາມາດຊື້-ຂາຍປ່ຽນມື ຫຼື ປ່ຽນເປັນເງິນສົດໄດ້ໃນຕະຫຼາດຂັ້ນສອງ.

**ບໍລິສັດຈົດທະບຽນ** ໝາຍເຖິງ ບໍລິສັດທີ່ໄດ້ນຳເອົາຫຼັກຊັບຂອງຕົນທີ່ຜ່ານການອອກຈຳໜ່າຍຫຼັກຊັບໃຫ້ແກ່ຜູ້ລົງທຶນໃນຕະຫຼາດຂັ້ນໜຶ່ງ ຕາມການອະນຸຍາດຈາກອົງການຄຸ້ມຄອງວຽກງານຫຼັກຊັບ (ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານ ຄຄຊ) ຫຼັງຈາກນັ້ນ ບໍລິສັດດັ່ງກ່າວໄດ້ນຳເອົາຫຼັກຊັບຂອງຕົນເຂົ້າຈົດທະບຽນຕາມລະບຽບການ ກ່ຽວກັບເງື່ອນໄຂການຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອຈຸດປະສົງ ສ້າງສະພາບຄ່ອງໃຫ້ແກ່ຫຼັກຊັບທີ່ຜູ້ລົງທຶນ ຖືຄອງຢູ່ນັ້ນ ຫຼື ໄດ້ຊື້ກັບບໍລິສັດຂອງຕົນໃນຕະຫຼາດຂັ້ນໜຶ່ງນັ້ນສາມາດນຳມາແລກປ່ຽນຊື້-ຂາຍໃນຕະຫຼາດຫຼັກຊັບ ຫຼື ເອີ້ນວ່າ: ຕະຫຼາດຂັ້ນສອງ ເພື່ອໃຫ້ຜູ້ລົງທຶນສາມາແລກປ່ຽນຊື້-ຂາຍ ເປັນເງິນສົດ ຫຼື ເອົາກຳໄລກັນໄດ້.

<u>**ຕົວຢ່າງ**</u>: ພາຍຫຼັງບໍລິສັດສຳເລັດການອອກຈຳໜ່າຍຮຸ້ນແລ້ວ ແລະ ໄດ້ນຳເອົາຮຸ້ນຂອງຕົນໄປຈົດທະບຽນໃນຕະຫຼາດຫຼັກຊັບ ຕາມລະບຽບການຈົດທະບຽນຂອງຕະຫຼາດຫຼັກຊັບວາງອອກ ເຊິ່ງຮຸ້ນຈະຖືກຂຶ້ນທະບຽນຢູ່ຕະຫຼາດຫຼັກຊັບ ແລະ ຖືກຮັບຝາກໄວ້ໃນສູນຮັບຝາກຫຼັກຊັບຂອງຕະຫຼາດຫຼັກຊັບ ພາຍຫຼັງສຳເລັດການຈົດທະບຽນເປັນທີ່ຮຽບຮ້ອຍແລ້ວ ພວກເຮົາສາມາດເອີ້ນບໍລິສັດດັ່ງກ່າວວ່າ: **"ບໍລິສັດຈົດທະບຽນ"** ເຊິ່ງປະຈຸບັນບໍລິສັດຈົດທະບຽນຢູ່ ສປປ ລາວ ລວມມີ ສາມ ບໍລິສັດຄື: 1) ບໍລິສັດຜະລິດ-ໄຟ້າລາວມະຫາຊົນ, 2) ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ 3) ບໍລິສັດລາວເວີນມະຫາຊົນ.

## *II. ບໍລິສັດ ແລະ ຜູ້ຖືຮຸ້ນ ຈະໄດ້ຮັບຜົນປະໂຫຍດຫຍັງແດ່ໃນການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ?*

ບັນດາທ່ານອາດບໍ່ທັນເຂົ້າໃຈຕໍ່ກັບການດຳເນີນທຸລະກິດທີ່ຕິດພັນກັບວຽກງານຫຼັກຊັບ ເຊິ່ງຍັງຖືວ່າເປັນວຽກງານໃໝ່ ໃນປະຈຸບັນ ຢູ່ ສປປ ລາວ ເຊິ່ງປະຊາຊົນລາວເຮົາຫຼາຍທ່ານອາດຍັງບໍ່ທັນຮູ້ ຫຼື ຄິດວ່າຖ້າບໍລິສັດເຂົ້າໄປຈົດທະບຽນໃນຕະຫຼາດຫຼັກຊັບແລ້ວ ຈະໄດ້ຮັບຜົນປະໂຫຍດຫຍັງແດ່? ເຊິ່ງບັນຫານີ້ຂ້າພະເຈົ້າ ຈຶ່ງຢາກໜ້າທີ່ເປັນຜູ້ນຳສະເໜີກ່ຽວກັບຜົນປະໂຫຍດຂອງການຈົດທະບຽນໃນຕະຫຼາດຫຼັກຊັບນັ້ນກໍ່ໝາຍຄວາມວ່າຈະສ້າງໂອກາດທີ່ສຳຄັນ ແລະ ເປັນທາງເລືອກໃໝ່ໃຫ້ແກ່ບໍລິສັດຂອງທ່ານ ຈະໄດ້ຮັບຜົນປະໂຫຍດ ດັ່ງຕໍ່ໄປນີ້:

## I. *ຜົນປະໂຫຍດຕໍ່ກັບບໍລິສັດ*

1. ສ້າງສະພາບຄ່ອງໃຫ້ແກ່ຫຼັກຊັບຂອງບໍລິສັດ ສາມາດປ່ຽນມືໄດ້ (ດ້ວຍການແລກປ່ຽນຊື້-ຂາຍໃນລະບົບຊື້-ຂາຍຫຼັກຊັບຂອງຕະຫຼາດຫຼັກຊັບ);
2. ເພີ່ມທາງເລືອກໃຫ້ແກ່ບໍລິສັດໃນການລະດົມທຶນຈາກຜູ້ລົງທຶນ ໃນຕະຫຼາດຂັ້ນໜຶ່ງໄດ້ ໃນເວລາທີ່ ຕ້ອງການທຶນຢ່າງມະຫາສານ ເພື່ອນຳໃຊ້ເຂົ້າໃນການຂະຫຍາຍກິດຈະການຂອງຕົນນອກເໜືອຈາກ ການໄປກູ້ຢືມຈາກລະບົບທະນາຄານ;
3. ສ້າງຄວາມເຂັ້ມແຂງທາງດ້ານການບໍລິຫານ ແລະ ຄວາມເຂັ້ມແຂງທາງດ້ານຖານະການເງິນການປ່ຽນແປງຈາກການບໍລິຫານແບບຄອບຄົວ ມາເປັນການບໍລິຫານແບບມືອາຊີບໃຫ້ແກ່ບໍລິສັດ;
4. ສ້າງຄວາມໜ້າເຊື່ອຖື, ພາບພົດທີ່ດີ, ຊື່ສຽງແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ໃຫ້ແກ່ບໍລິສັດໃຫ້ເປັນທີ່ຮັບຮູ້ ທັງພາຍໃນ ແລະ ຕ່າງປະເທດ ແລະ ເພີ່ມປະສິດທິພາບ ແລະ ສ້າງຄວາມໂປ່ງໃສ ໃນການດຳເນີນທຸລະກິດ ຍ້ອນບໍລິສັດຈົດທະບຽນ ຜ່ານກົນໄກການເປີດເຜີຍຂໍ້ມູນ-ຂ່າວສານ ແລະ ການເຄື່ອນໄຫວຕ່າງໆ ໃຫ້ແກ່ມວນຊົນຊາບໃນແຕ່ໄລຍະ ຊຶ່ງຈະເຮັດໃຫ້ບໍລິສັດເປັນທີ່ຮູ້ຈັກຂອງຜູ້ລົງທຶນຫຼາຍຂຶ້ນ ແລະ ຊ່ວຍເສີມສ້າງຄວາມເຊື່ອຖືໃຫ້ແກ່ລູກຄ້າ, ຄູ່ຄ້າ, ຄູ່ຮ່ວມມື ແລະ ສະຖາບັນການເງິນນຳອີກ. ນອກຈາກນີ້, ຍັງເປັນການເພີ້ມໂອກາດທາງດ້ານການຄ້າ, ການເຂົ້າເຖິງຄູ່ຮ່ວມທຸລະກິດ ແລະ ການຕໍ່ຍອດທຸລະກິດໃນອານາຄົດພ້ອມທັງ ທີ່ຈະສາມາດດຶງດູດຄວາມສົນໃຈໃຫ້ແກ່ຜູ້ລົງທຶນເຂົ້າມາລົງທຶນໃນບໍລິສັດຫຼາຍຂຶ້ນພ້ອມທັງເປັນການສຸກຍູ້ໃຫ້ບໍລິສັດດັ່ງກ່າວ ມີການຄຸ້ມຄອງບໍລິຫານທີ່ດີ, ມີຄວາມຮັບຜິດຊອບ ແລະ ບໍລິຫານງານຢ່າງເປັນມືອາຊີບສູງຂຶ້ນ.
5. ພະນັກງານຂອງບໍລິສັດນັບວ່າເປັນປັດໄຈທີ່ສຳຄັນຍິ່ງຕໍ່ການດຳເນີນທຸລະກິດໃຫ້ປະສົບຜົນສຳເລັດ ການໃຫ້ພະນັກງານມີສ່ວນຮ່ວມໃນການເປັນເຈົ້າຂອງບໍລິສັດ ຈະຊ່ວຍເສີມສ້າງຄວາມຈົ່ງຮັກພັກດີ, ຜົນຕອບແທນທີ່ດີ ແລະ ຄວາມພາກພູມໃຈ ໃຫ້ແກ່ພະນັກງານ ໃນການທຸ້ມເທ ຄວາມຮູ້ ແລະ ຄວາມສາມາດຢ່າງເຕັມທີ່ ເຂົ້າໃນການສ້າງຜົນປະໂຫຍດ ແລະ ການຂະຫຍາຍຕົວ ໃຫ້ແກ່ການດຳເນີນທຸລະກິດຂອງບໍລິສັດ;
6. ໃນກໍລະນີ ການຈົດທະບຽນໃນຕະຫຼາດຫຼັກຊັບລາວ ບໍລິສັດຈະໄດ້ຮັບນະໂຍບາຍຍົກເວັ້ນທາງດ້ານອາກອນກຳໄລ 5 % ຈາກອັດຕາປົກກະຕິ ເປັນໄລຍະເວລາ ສີ່ປີ ນັບແຕ່ວັນເຂົ້າຈົດທະບຽນເປັນຕົ້ນໄປ. ນອກຈາກນັ້ນ ລາຍຮັບຈາກການລະດົມທຶນຂອງບໍລິສັດຈົດທະບຽນຈະຖືກຍົກເວັ້ນອາກອນລາຍໄດ້.

## *II. ຜົນປະໂຫຍດຕໍ່ກັບ ຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນ*

1. ເພີ່ມສະພາບຄ່ອງ ແລະ ສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນ ເປັນຕົ້ນ ການເຂົ້າຈດທະບຽນໃນຕະຫຼາດຫຼັກຊັບ ຈະຊ່ວຍໃຫ້ຮຸ້ນທີ່ຖືຄອງຢູ່ ມີສະພາບຄ່ອງຫຼາຍຂື້ນ ເນື່ອງຈາກວ່າ ຜູ້ຖືຮຸ້ນສາມາດນໍາເອົາຮຸ້ນຂອງຕົນ ມາແລກປ່ຽນຊື້-ຂາຍ ກັນໄດ້ຢ່າງງ່າຍດາຍ, ວ່ອງໄວ້ ໂດຍມີຄວາມໂປ່ງໃສ ແລະ ຍຸຕິທໍາ ໂດຍຜ່ານກົນໄກແລກປ່ຽນຊື້-ຂາຍໃນຕະຫຼາດຫຼັກຊັບອີກດ້ວຍ;
2. ໄດ້ຮັບນະໂນບາຍຍົກເວັ້ນອາກອນລາຍໄດ້ ໃນເວລາໄດ້ຮັບເງິນປັນຜົນ ແລະ ອາກອນກໍາໄລ ໃນກໍລະນີ ມີກໍາໄລຈາກສ່ວນຕ່າງຈາກການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບ. ຊຶ່ງຕ່າງຈາກຜູ້ຖືຮຸ້ນຂອງບໍລິສັດທົ່ວໄປທີ່ບໍ່ທັນໄດ້ຈົດທະບຽນ ຈະບໍ່ໄດ້ຮັບນະໂຍບາຍຍົກເວັ້ນທາງດ້ານອາກອນລາຍໄດ້ຈາກເງິນປັນຜົນ ແລະ ອາກອນກໍາໄລ ເກີດຈາກສ່ວນຕ່າງໃນເວລາຂາຍຮຸ້ນຂອງຕົນ.

ເພື່ອເປັນການມອນທ້າຍ ອີກເທື່ອໜຶ່ງ ຂ້າພະເຈົ້າຂໍສະຫຼຸບຄືນໂດຍຫຍໍ້ໃຫ້ບັນດາທ່ານເຂົ້າໃຈງ່າຍຂື້ນ ກ່ຽວກັບວ່າຜົນປະໂຫຍດທີ່ກ່າວມາຂ້າງເທິງນັ້ນ ບັນຫາທີ່ເປັນແຮງຈູງໃຈເຮັດໃຫ້ບໍລິສັດຕ່າງໆ ສົນໃຈໃນການລະດົມທຶນ ໂດຍການອອກຈໍາໜ່າຍຫຼັກຊັບ ແລະ ເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ ລວມມີ 5 ຢ່າງຄື:

1. ຕ້ອງການລະດົມທຶນໄລຍະຍາວຈາກມວນຊົນ;
2. ຕ້ອງການໃຫ້ບໍລິສັດມີຄວາມໜ້າເຊື່ອຖື, ຊື່ສຽງ ແລະ ມີພາບລັກທີ່ດີ;
3. ຕ້ອງການເພີ່ມມູນຄ່າຫຼັກຊັບ ແລະ ສະພາບຄ່ອງໃຫ້ກັບຜູ້ຖືຫຼັກຊັບ;
4. ເພີ່ມປະສິດທິພາບ, ຄວາມໂປ່ງໃສ ແລະ ຍຸຕິທໍາ ໃນການເຄື່ອນໄຫວທຸລະກິດ;
5. ຕ້ອງການ ສິດ ແລະ ຜົນປະໂຫຍດ ທາງນະໂນບາຍທາງດ້ານດ້ານອາກອນ.